ລະບຽບພວກເລວີ 24:12 ເຂົາຈຶ່ງຈຳຊາຍຄົນນັ້ນໄວ້ຈົນກວ່ານ້ຳພຣະທັຍຂອງພຣະຜູ້ເປັນເຈົ້າຈະເປັນທີ່ກະຈ່າງຕໍ່ເຂົາທັງຫລາຍ

ພຣະບັນຍັດສອງ 18:6 ຖ້າຄົນເລວີຄົນໃດມາຈາກເມືອງໃດໃນອິສຣາເອນອັນເປັນທີ່ຢູ່ຂອງເຂົາ ຈະມາຍັງສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າຊົງເລືອກໄວ້ກໍ່ໃຫ້ເຂົາມາໄດ້ຕາມໃຈປາຖນາ

ນາງຣູດ 1:18 ເມື່ອນາງນາໂອມີເຫັນນາງຣູດມີຄວາມຕັ້ງໃຈໄປກັບຕົນແທ້ ນາງກໍບໍ່ເວົ້າຫຍັງອີກ

1 ຂ່າວຄາວ 28:9 ໂຊໂລໂມນບຸດຂອງເຮົາເອີຍ ເຈົ້າຈົ່ງຮູ້ຈັກພຣະເຈົ້າ ແລະຈົ່ງບົວລະບັດພຣະອົງດ້ວຍໃຈຈິງແລະດ້ວຍຄວາມເຕັມໃຈຂອງເຈົ້າ ເພາະພຣະເຈົ້າຊົງພິຈາຣະນາຈິດໃຈທັງປວງ ແລະຊົງເຂົ້າໃຈໃນແຜນງານແລະຄວາມຄິດທັງປວງ ຖ້າເຈົ້າສແວງຫາພຣະອົງເຈົ້າ ຈະພົບພຣະອົງ ແຕ່ຖ້າເຈົ້າປະຖິ້ມພຣະອົງ ພຣະອົງຈະຊົງແກ່ວງເຈົ້າອອກໄປເສັງເປັນນິດ

ເນເຫມີ 4:6 ດັ່ງນັ້ນ ພວກຂ້າພະເຈົ້າຈຶ່ງພາກັນສ້າງກຳແພງເມືອງຕໍ່ໄປ ບໍ່ພໍເທົ່າໃດກຳແພງເມືອງກໍສູງຂຶ້ນໄດ້ເຄິ່ງນຶ່ງແລ້ວ ຍ້ອນວ່າປະຊາຊົນພາກັນຮ້ອນຮົນຕໍ່ວຽກການ

ໂຢບ 23:13 ແຕ່ພຣະອົງຊົງປ່ຽນແປງບໍ່ໄດ້ ແລະຜູ້ໃດຈະປິ່ນພຣະອົງໄດ້ ພຣະອົງມີພຣະປະສົງສິ່ງໃດພຣະອົງກໍຊົງກະທຳສິ່ງນັ້ນ

ສຸພາສິດ 29:11 ຄົນໂງ່ຍ່ອມໃຫ້ຄວາມໂກດຂອງເຂົາພຸ່ງອອກມາເຕັມທີ່ ແຕ່ນັກປາດຍ່ອມຍັບຍັ້ງໂທສະໄວ້ງຽບໆ

ເອຊາຢາ 26:3 ໃຈແນ່ວແນ່ນັ້ນ ພຣະອົງຊົງຮັກສາໄວ້ໃນສັນຕິພາບອັນສົມບູນ ເພາະເຂົາວາງໃຈໃນພຣະອົງ

ມາຣະໂກ 5:15ເມື່ອເຂົາມາເຖິງພຣະເຢຊູກໍເຫັນຄົນທີ່ຜີທັງກອງທັບສິງຢູ່ນັ້ນ ນຸ່ງຫົ່ມເສື້ອຜ້າມີສະຕິອາຣົມດີ ເຂົາຈຶ່ງມີໃຈຢ້ານ

ລູກາ 8:35 ແລ້ວຄົນທັງປວງກໍອອກມາເບິ່ງເຫດການທີ່ເກີດຂຶ້ນນັ້ນ ແລະເມື່ອມາເຖິງພຣະເຢຊູ ເຂົາໄດ້ເຫັນຄົນທີ່ຜີຮ້າຍອອກຈາກຕົວນຸ່ງຫົ່ມເສື້ອຜ້າມີສະຕິອາຣົມດີ ນັ່ງຢູ່ໃກ້ພຣະບາດພຣະເຢຊູ ເຂົາຈຶ່ງມີໃຈຢ້ານ

ກິດຈະການ 17:11 ພວກຍິວເຫລົ່ານີ້ມີຈິດໃຈສູງສົ່ງກວ່າຊາວເມືອງເທຊະໂລນິກ ເພາະເຂົາມີໃຈເຫລື້ອມໃສຮັບເອົາພຣະທັມແລະຄົ້ນເບິ່ງພຣະຄັມພີທຸກວັນ ເພື່ອຢາກຮູ້ວ່າຂໍ້ຄວາມນັ້ນເປັນຈິງດັ່ງກ່າວຫລືບໍ່

ກິດຈະການ 20:19 ເຮົາໄດ້ຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍການຖ່ອມໃຈທຸກຢ່າງ ດ້ວຍນ້ຳຕາໄຫລ ແລະດ້ວຍບການຖືກທົດລອງທີ່ບັງເກີດແກ່ເຮົາ ດ້ວຍພວກຍິວຄິດປອງຮ້າຍຕໍ່ເຮົາ

ໂຣມ 7:25 ເຮົາຂອບພຣະຄຸນພຣະເຈົ້າໂດຍທາງພຣະເຍຊູຄຣິດເຈົ້າຂອງເຮົາທັງຫລາຍ ເຫດດັ່ງນີ້ທາງດ້ານຈິດໃຈເຮົາກໍຍອມຮັບໃຊ້ຕາມຂໍ້ບັນຍັດຂອງພຣະເຈົ້າ ແຕ່ດ້ານຮ່າງກາຍຂອງເຮົາກໍເປັນຂ້ອຍຂ້າຢູ່ໃຕ້ກົດແຫ່ງຄວາມຜິດບາບ

ໂຣມ 8:6 ດ້ວຍວ່າການໃສ່ໃຈຢູ່ກັບຝ່າຍມະນຸດນັ້ນກໍຄືຄວາມຕາຍ ແລະການໃສ່ໃຈກັບຝ່າຍພຣະວິນຍານນັ້ນກໍຄືຊີວິດແລະສັນຕິສຸກ

ໂຣມ 8:27 ແລະພຣະອົງຜູ້ຊົງສອດສ່ອງຮູ້ໃຈມະນຸດ ກໍຊົງຊາບຄວາມນຶກຄິດຂອງພຣະວິນຍານ ເພາະວ່າ ພຣະວິນຍານຊົງອ້ອນວອນຂໍສຳລັບພວກໄພ່ພົນຂອງພຣະເຈົ້າຕາມນ້ຳພຣະທັຍພຣະອົງ

ໂຣມ 11:34 ເພາະວ່າໃຜຫນໍ່ໄດ້ຮູ້ຈັກພຣະທັຍຂອງພຣະເຈົ້າ ຫລືໃຜຫນໍ່ເປັນທີ່ປຶກສາຂອງພຣະອົງ

ໂຣມ 12:2 ຢ່າດຳເນີນຊີວິດເຫມືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວອຸປນິສັຍຂອງພວກເຈົ້າຈຶ່ງຈະປ່ຽນໃຫມ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະທັຍຂອງພຣະເຈົ້າ ຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ຊອບພຣະທັຍ ແລະອັນໃດດີທີ່ສຸດ

ໂຣມ 12:16 ຈົ່ງຊົມຊື່ນຍິນດີໃນຄວາມໄວ້ວາງใจ ຈົ່ງອົດທົນຕໍ່ຄວາມຍາກລຳບາກ ຈົ່ງຫມັ່ນເອົາໃຈໃສ່ໃນການໄຫວ້ວອນ

ໂຣມ 14:5 ຄົນນຶ່ງຖືວ່າວັນນຶ່ງດີກວ່າອີກວັນນຶ່ງ ແຕ່ອີກຄົນນຶ່ງຖືວ່າທຸກວັນຫມືອນກັນ ຄວນໃຫ້ທຸກຄົນມີຄວາມແນ່ໃຈໃນຄວາມຄິດເຫັນຂອງຕົນເອງ

ໂຣມ 15:6 ເພື່ອພວກເຈົ້າຈະໄດ້ພ້ອມໃຈກັນສັຣເສີນພຣະເຈົ້າ ຜູ້ຊົງເປັນພຣະບິດາຂອງພຣະເຍຊູຄຣິດເຈົ້າຂອງເຮົາທັງຫລາຍ

1 ໂກຣິນໂທ 1:10 ດັ່ງນີ້ເຮົາຫມາຍຄວາມວ່າ ຄືພວກເຈົ້າຕ່າງຄົນກໍຕ່າງກ່າວວ່າ, “ຂ້ອຍເປັນຝ່າຍໂປໂລ” ຫລື “ຂ້ອຍເປັນຝ່າຍອາໂປໂລ” ຫລື “ຂ້ອຍເປັນຝ່າຍເກຟາ” ຫລື “ຂ້ອຍເປັນ

ຝ່າຍພຣະຄຣິດ”

1 ໂກຣິນໂທ 2:16 “ດ້ວຍວ່າຜູ້ໃດຫນໍ ໄດ້ຮູ້ຈັກພຣະທັຍຂອງອົງພຣະຜູ້ເປັນເຈົ້າ ຈຶ່ງຈະສັ່ງສອນພຣະອົງໄດ້” ແຕ່ຝ່າຍເຮົາທັງຫລາຍກໍມີພຣະທັຍຂອງພຣະຄຣິດ

2 ໂກຣິນໂທ 7:7 ແລະບໍ່ໃຊ່ແຕ່ພຽງການມາຂອງຕີໂຕເທົ່ານັ້ນ ແຕ່ດ້ວຍການທີ່ພວກເຈົ້າໄດ້ຊູໃຈຂອງຕີໂຕອີກດ້ວຍ ຕາມທີ່ຕີໂຕໄດ້ມາເລົ່າໃຫ້ຟັງເຖິງຄວາມອາລັຍແລະຄວາມໂສກເສົ້າຂອງເຈົ້າທັງຫລາຍ ກັບທັງໃຈຮ້ອນຮົນຂອງພວກເຈົ້າທີ່ມີຕໍ່ເຮົາ ຈຶ່ງເຮັດໃຫ້ເຮົາມີຄວາມຊົມຊື່ນຍິນດີທະວີຂຶ້ນ

2 ໂກຣິນໂທ 8:12 ເພາະວ່າຖ້າມີນ້ຳໃຈພ້ອມຢູ່ແລ້ວ ພຣະເຈົ້າກໍຊົງພໍພຣະທັຍທີ່ຈະຊົງຮັບຕາມທີ່ທຸກຄົນມີຢູ່ ບໍ່ໃຊ່ຕາມທີ່ເຂົາບໍ່ມີ

2 ໂກຣິນໂທ 9:2 ເພາະເຮົາຮູ້ວ່າໃຈຂອງພວກເຈົ້າພ້ອມຢູ່ແລ້ວ ເຮົາຈຶ່ງກ່າວອວດອ້າງເຣື່ອງພວກເຈົ້າຕໍ່ຊາວມາເກໂດເນັຍວ່າ ທີ່ແຂວງອະຂາຍາເຂົາກໍຈັດແຈງໄວ້ພ້ອມແລ້ວຕັ້ງແຕ່ປີກາຍ ແລະໃຈຮ້ອນຮົນຂອງເຈົ້າທັງຫລາຍກໍຊຸກຍູ້ຫລາຍຄົນໃຫ້ເຂົາສົນໃຈ

2 ໂກຣິນໂທ 13:11 ໃນສຸດທ້າຍນີ້ພີ່ນ້ອງທັງຫລາຍເອີຍ ເຮົາຂໍລາພວກເຈົ້າກ່ອນ ຈົ່ງປັບປຸງໃຫ້ຕົວຈະເຣີນຂຶ້ນ ຈົ່ງຟັງຄຳວອນຂໍຂອງເຮົາ ຈົ່ງເປັນນ້ຳນຶ່ງໃຈດຽວກັນ ຈົ່ງຢູ່ຮ່ວມກັນດ້ວຍຄວາມສງົບ ແລະພຣະເຈົ້າຜູ້ຊົງຮັກແລະຊົງປະທານສັນຕິສຸກ ຈະຊົງສະຖິດຢູ່ນຳເຈົ້າທັງຫລາຍ

ເອເຟໂຊ 4:23 ແລະຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງຕັ້ງຂຶ້ນໃຫມ່

ຟີລິປອຍ 2:2,3 ກໍຂໍໃຫ້ເຈົ້າທັງຫລາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບເຕັມ ດ້ວຍການທີ່ມີຄວາມຄິດຢ່າງດຽວກັນ ມີຄວາມຮັກຢ່າງດຽວກັນ ມີໃຈຮ່ວມສາມັກຄີເປັນນ້ຳນຶ່ງໃຈດຽວກັນ 3 ຢ່າເຮັດສິ່ງໃດໃນທາງຊົ່ວດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈວົ່ງຖືວ່າຄົນອື່ນດີກວ່າຕົນ

ຟີລິປອຍ 4:2 ເຮົາຂໍເຕືອນນາງຢູໂອເດັງ ແລະຂໍເຕືອນນາງຊິນຕີເຂ ໃຫ້ມີໃຈປອງດອງກັນໃນອົງພຣະຜູ້ເປັນເຈົ້າ

ຟີລິປອຍ 4:7 ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຍຊູຄຣິດ

ໂກໂລຊາຍ 3:12 ເຫດສັນນັ້ນໃນຖານະທີ່ເປັນພວກຊຶ່ງພຣະເຈົ້າຊົງຮັກ ແລະຊົງເລືອກໄວ້ໃຫ້

ເປັນໄພ່ພົນຂອງພຣະອົງ ຈົ່ງສວມໃນເມດຕາ ໃຈປານີ ໃຈຖ່ອມລົງ ໃຈອ່ອນສຸພາບ ໃຈ ອົດທົນດົນນານ

2 ເທຊະໂລນິກ 2:2 ຢ່າໃຫ້ໃຈຂອງເຈົ້າທັງຫລາຍປັ່ນປ່ວນໂດຍງ່າຍ ຫລືສະທ້ານຕົກໃຈ ບໍ່ວ່າ ຈະມາດ້ວຍທາງວິນຍານ ຫລືມາທາງຄຳເວົ້າ ຫລືທາງจົດຫມາຍທີ່ອ້າງວ່າມາຈາກເຮົາ ໂດຍອ້າງວ່າວັນຂອງອົງພຣະຜູ້ເປັນເຈົ້າມາເຖິງແລ້ວ

2 ຕິໂມທຽວ 1:7 ເພາະວ່າພຣະເຈົ້າບໍ່ໄດ້ຊົງປະທານໃຈອັນຢ້ານກົວໃຫ້ແກ່ເຮົາ ແຕ່ໄດ້ຊົງປະ ທານໃຈອັນປະກອບດ້ວຍຣິດອຳນາດ ຄວາມຮັກ ແລະການບັງຄັບຕົນໃຫ້ແກ່ເຮົາ

ຕິໂຕ 2:6 ຝ່າຍພວກຊາຍຫນຸ່ມກໍເຫມືອນກັນ ຈົ່ງຕັກເຕືອນເຂົາໃຫ້ມີສະຕິອັນດີຮອບຄອບ

ເຮັບເຣີ 8:10 ອົງພຣະຜູ້ເປັນເຈົ້າຊົງກ່າວອີກວ່າ, “ນີ້ແມ່ນຄຳສັນຍາ ທີ່ເຮົາຈະສັນຍາໄວ້ກັບ ຍາດວົງອິສຣາເອນ ພາຍຫລັງສະໄຫມນັ້ນ ຄືເຮົາຈະບັນຈຸຂໍ້ບັນຍັດຂອງເຮົາໄວ້ໃນໃຈຂອງ ເຂົາ ເຮົາຈະຈາຣຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາ ແລະ ຝ່າຍເຂົາຈະເປັນພົລເມືອງຂອງເຮົາ

1 ເປໂຕ 1:13 ເຫດສັນນັ້ນ ຈົ່ງຕຽມຕົວຕຽມໃຈຂອງພວກທ່ານໃຫ້ດີ ຈົ່ງມີສະຕິລະວັງຕົວ ແລະຈົ່ງຕັ້ງຄວາມຫວັງໃຫ້ເຕັມບໍຣິບູນໃນພຣະຄຸນ ຄືພຣະຄຸນຊຶ່ງຈະຊົງໂຜດປະທານແດ່ ພວກທ່ານ ເມື່ອພຣະເຢຊູຈະສະເດັດມາປາກົດ

1 ເປໂຕ 5:2 ຈົ່ງລ້ຽງຝູງແກະຂອງພຣະເຈົ້າທີ່ຝາກໄວ້ກັບພວກທ່ານ ຈົ່ງດູແລເຂົາບໍ່ແມ່ນ ດ້ວຍໃຈຂົມຂື່ນ ແຕ່ດ້ວຍເຕັມໃຈຕາມນ້ຳພຣະທັຍຂອງພຣະເຈົ້າ ບໍ່ແມ່ນດ້ວຍເຫັນແກ່ ຊັບສົ່ງຂອງທີ່ໄດ້ມາໃນທາງທຸດຈະຣິດ ແຕ່ດ້ວຍໃຈເຫລື້ອມໃສ

2 ເປໂຕ 3:1 ພວກທີ່ຮັກເອີຍ, ນີ້ແຫລະ ເປັນจົດຫມາຍສະບັບທີ່ສອງທີ່ຂ້າພະເຈົ້າໄດ້ຂຽນ ມາເຖິງທ່ານທັງຫລາຍ ໃນจົດຫມາຍທັງສອງສະບັບນີ້ ຂ້າພະເຈົ້າໄດ້ປຸກເຕືອນຈິດໃຈອັນ ຊື່ສັດຂອງພວກທ່ານໃຫ້ລະນຶກເຖິງ

ພຣະນິມິດ 17:9 ໃນເຣື່ອງນີ້ແຫລະ, ຕ້ອງໃຊ້ຈິດໃຈທີ່ມີສະຕິປັນຍາ ຫົວທັງເຈັດນັ້ນໄດ້ແກ່ພູ ນ້ອຍເຈັດຫນ່ວຍທີ່ຍິງນັ້ນນັ່ງຢູ່ ຄືໄດ້ແກ່ກະສັດເຈັດອົງ